ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 23 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 16 JUL 2021

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0071/ສຄຄຊ, ລົງວັນທີ 7 ກໍລະກົດ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເພື່ອເປັນເຄື່ອງມືຄຸ້ມຄອງ ຜູ້ລົງທຶນພາຍໃນ ກ່ຽວກັບການຊື້ ຂາຍຫຼັກຊັບຢູ່ຕ່າງປະເທດ ແນໃສ່ຮັບປະກັນການຄຸ້ມຄອງຜູ້ລົງທຶນພາຍໃນ ມີຄວາມເປັນລະບຽບຮຽບຮ້ອຍ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ແມ່ນການອະນຸຍາດ, ຕິດຕາມ, ກວດກາ ຜູ້ລົງທຶນ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫຼັກຊັບ** ໝາຍເຖິງ ຮຸ້ນ, ພັນທະບັດລັດຖະບານ ແລະ ຮຸ້ນກູ້ ທີ່ຈົດທະບຽນໃນ ຕະຫຼາດຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ ຂອງຕ່າງປະເທດ ພ້ອມທັງ ໜ່ວຍລົງທຶນທີ່ ຈົດທະບຽນ ຫຼື ບໍ່ຈົດທະບຽນ ໃນຕະຫຼາດ

ຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ ຂອງຕ່າງປະເທດ ແລະ ຫຼັກຊັບອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;

2. **ໜ່ວຍລົງທຶນຈົດທະບຽນ** ໝາຍເຖິງ ໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ນຳເອົາໜ່ວຍລົງທຶນຂອງຕົນໄປຈົດທະບຽນຢູ່ ຕະຫຼາດຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ;

3. **ໜ່ວຍລົງທຶນບໍ່ຈົດທະບຽນ** ໝາຍເຖິງ ໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ບໍ່ນຳເອົາໜ່ວຍລົງທຶນຂອງຕົນໄປຈົດທະບຽນຢູ່ ຕະຫຼາດຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ;

4. **ຜູ້ລົງທຶນພາຍໃນ** ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດປະກັນໄພ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ລັດວິສາຫະກິດ, ນິຕິບຸກຄົນ ແລະ ຜູ້ລົງທຶນພາຍໃນປະເພດອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. **ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ** ໝາຍເຖິງ ສະຖາບັນການເງິນ ທີ່ດຳເນີນທຸລະກິດໃນການສ້າງຕັ້ງ ແລະ ບໍລິຫານກອງທຶນເພື່ອການລົງທຶນ ໂດຍໄດ້ຮັບອະນຸຍາດດຳເນີນທຸລະກິດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. **ຕະຫຼາດຫຼັກຊັບ** ໝາຍເຖິງ ຕະຫຼາດໃຫ້ບໍລິການຊື້ ຂາຍຫຼັກຊັບທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຫຼັກຊັບຕ່າງປະເທດ;

7. **ສູນຊື້ ຂາຍຫຼັກຊັບ** ໝາຍເຖິງ ສູນໃຫ້ບໍລິການຊື້ ຂາຍຫຼັກຊັບທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຫຼັກຊັບຕ່າງປະເທດ;

8. **ພາກສ່ວນກ່ຽວຂ້ອງ** ໝາຍເຖິງ ກົມກອງທີ່ກ່ຽວຂ້ອງ ຂອງກະຊວງການເງິນ ຫຼື ກະຊວງທີ່ກ່ຽວຂ້ອງ, ທະນາຄານແຫ່ງ ສປປ ລາວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 4 ຫຼັກການ

ການຄຸ້ມຄອງຜູ້ລົງທຶນພາຍໃນທີ່ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການ ຕິດຕາມ ແລະ ກວດກາ ຢ່າງລວມສູນ;
2. ຜູ້ລົງທຶນຮັບຜິດຊອບຕໍ່ຄວາມສ່ຽງ ກ່ຽວກັບການລົງທຶນຕາມກົນໄກຕະຫຼາດ;
3. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
4. ສະໝັກໃຈໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ລົງທຶນພາຍໃນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ.

## ໝວດທີ 2
## ການຂໍອະນຸຍາດລົງທຶນໃນຫຼັກຊັບຢູ່ຕ່າງປະເທດ

### ມາດຕາ 6 ການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ

ຜູ້ລົງທຶນພາຍໃນ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບົນພື້ນຖານການເຫັນດີຂອງພາກສ່ວນກ່ຽວຂ້ອງ ຊຶ່ງຜູ້ລົງທຶນທີ່ໄດ້ຮັບ

ອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ສາມາດລົງທຶນຕະຫຼອດໄລຍະເວລາຈົນເຖິງວັນທີ່ສິ້ນສຸດການລົງທຶນຂອງຕົນ.

ກໍລະນີ ທີ່ຜູ້ລົງທຶນພາຍໃນໃດໜຶ່ງທີ່ສິ້ນສຸດການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຄືນໃໝ່ ຕ້ອງຂໍອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຄືນໃໝ່.

ກໍລະນີ ຜູ້ລົງທຶນພາຍໃນໃດໜຶ່ງຫາກໄດ້ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ເອກະສານປະກອບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ເງື່ອນໄຂການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ຜູ້ລົງທຶນພາຍໃນ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີແຜນການລົງທຶນ ແລະ ມີເງິນຕາຕ່າງປະເທດພຽງພໍ ເພື່ອຮັບປະກັນໃຫ້ແກ່ການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ທີ່ຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມສະພາບໍລິຫານ ສຳລັບ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດປະກັນໄພ ແລະ ລັດວິສາຫະກິດ. ສຳລັບກອງທຶນເພື່ອການລົງທຶນແມ່ນໃຫ້ປະຕິບັດຕາມນະໂຍບາຍການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ຂອງກອງທຶນດັ່ງກ່າວ;
2. ມີຜົນກຳໄລຈາກການດຳເນີນທຸລະກິດຕໍ່ເນື່ອງ ສາມ ປີ ຍົກເວັ້ນກອງທຶນເພື່ອການລົງທຶນ;
3. ມີບັນຊີເງິນຕາຕ່າງປະເທດທີ່ເປີດຢູ່ນຳທະນາຄານທຸລະກິດພາຍໃນຢູ່ ສປປ ລາວ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ. ກໍລະນີ ທະນາຄານທຸລະກິດ ໃດໜຶ່ງຫາກມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ແມ່ນສາມາດເປີດບັນຊີເງິນຕາຕ່າງປະເທດຢູ່ທະນາຄານຂອງຕົນເອງໄດ້ ແຕ່ຕ້ອງແຍກບັນຊີດັ່ງກ່າວອອກເປັນອັນສະເພາະ ເພື່ອລົງທຶນຊື້ ຂາຍຫຼັກຊັບຢູ່ຕ່າງປະເທດ;
4. ໄດ້ຮັບການເຫັນດີຈາກພາກສ່ວນກ່ຽວຂ້ອງ;
5. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ເອກະສານປະກອບການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ເອກະສານປະກອບການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາແຜນການລົງທຶນ ທີ່ຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ຫຼື ກອງປະຊຸມສະພາບໍລິຫານ ສຳລັບ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ບໍລິສັດປະກັນໄພ ແລະ ລັດວິສາຫະກິດ;
3. ສຳເນົາ ໜັງສືຊວນຊື້ ສຳລັບກອງທຶນເພື່ອການລົງທຶນ;
4. ເອກະສານຢັ້ງຢືນ ກ່ຽວກັບບັນຊີເງິນຕາຕ່າງປະເທດຈາກ ທະນາຄານທຸລະກິດ;
5. ເອກະສານຢັ້ງຢືນການເປັນຜູ້ລົງທຶນຜ່ານບໍລິສັດຫຼັກຊັບ ແລະ ສັນຍາຊື້ ຂາຍຜ່ານບໍລິສັດຫຼັກຊັບພາຍໃນ;
6. ແຜນການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ທີ່ປະກອບດ້ວຍເນື້ອໃນ ເປັນຕົ້ນ ປະເທດທີ່ຈະໄປລົງທຶນ, ຕະຫຼາດຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ, ປະເພດຫຼັກຊັບ, ມູນຄ່າ ແລະ ກຳນົດເວລາ ກ່ຽວກັບການລົງທຶນໃສ່ແຕ່ລະປະເພດຫຼັກຊັບ ແລະ ເນື້ອໃນອື່ນທີ່ຈຳເປັນ;
7. ສຳເນົາ ໃບອະນຸຍາດດຳເນີນທຸລະກິດຈາກພາກສ່ວນກ່ຽວຂ້ອງ;
8. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 ການພິຈາລະນາການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາເອກະສານປະກອບການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ພາຍໃນເວລາ 15 ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ ໂດຍການປະສານສົມທົບກັບ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. ກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາການພິຈາລະນາການຂໍອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນ ເພີ່ມເຕີມຈາກ ຜູ້ລົງທຶນທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາ ຊີ້ແຈງ ຫຼື ໃຫ້ຂໍ້ມູນ.

**ມາດຕາ 10 ຄ່າບໍລິການ**

ຜູ້ລົງທຶນພາຍໃນ ທີ່ໄດ້ຍື່ນເອກະສານປະກອບຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງເສຍຄ່າບໍລິການ ຈຳນວນ 10.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະຄ່າບໍລິການ ພາຍໃນວັນທີ່ຍື່ນເອກະສານປະກອບດັ່ງກ່າວ.

## ໝວດທີ 3
## ອັດຕາສ່ວນ, ວົງເງິນ, ເປົ້າໝາຍ ແລະ ຮູບແບບ ກ່ຽວກັບການລົງທຶນ ການໂຈະ ແລະ ການຖອນໃບອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ

**ມາດຕາ 11 ການລົງທຶນ**

ຜູ້ລົງທຶນພາຍໃນ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງລົງທຶນຕາມ ອັດຕາສ່ວນການລົງທຶນ, ວົງເງິນລົງທຶນ, ຫຼັກຊັບທີ່ອະນຸຍາດໃຫ້ລົງທຶນ ແລະ ຮູບແບບການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ອັດຕາສ່ວນການລົງທຶນ**

ຜູ້ລົງທຶນພາຍໃນ ຕ້ອງປະຕິບັດຕາມອັດຕາສ່ວນການລົງທຶນຕາມການກຳນົດຂອງພາກສ່ວນກ່ຽວຂ້ອງວາງອອກໃນແຕ່ລະໄລຍະ.

**ມາດຕາ 13 ວົງເງິນລົງທຶນ**

ວົງເງິນການລົງທຶນຂອງຜູ້ລົງທຶນພາຍໃນ ຕ້ອງປະຕິບັດຕາມການກຳນົດຂອງພາກສ່ວນອື່ນທີ່ກ່ຽວຂ້ອງວາງອອກໃນແຕ່ລະໄລຍະ.

**ມາດຕາ 14 ຫຼັກຊັບທີ່ອະນຸຍາດໃຫ້ລົງທຶນ**

ຜູ້ລົງທຶນພາຍໃນ ສາມາດລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຮຸ້ນທີ່ອອກຈຳໜ່າຍໃນຕະຫຼາດຂັ້ນໜຶ່ງ ແລະ ຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຫຼື ສູນຊື້ຂາຍຫຼັກຊັບ;
2. ພັນທະບັດລັດຖະບານ ແລະ ຮຸ້ນກູ້;

3. ໜ່ວຍລົງທຶນ ຈົດທະບຽນ ຫຼື ບໍ່ຈົດທະບຽນ ໃນຕະຫຼາດຫຼັກຊັບ ຫຼື ສູນຊື້ ຂາຍຫຼັກຊັບ;
4. ຫຼັກຊັບອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 ຮູບແບບການລົງທຶນ**

ຜູ້ລົງທຶນພາຍໃນ ຕ້ອງລົງທຶນຊື້ ຂາຍຫຼັກຊັບຢູ່ຕ່າງປະເທດ ຜ່ານບໍລິສັດຫຼັກຊັບພາຍໃນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດເປັນນາຍໜ້າຊື້ ຂາຍຫຼັກຊັບ ແລະ ຕ້ອງໂອນເງິນຜ່ານທະນາຄານທຸລະກິດພາຍໃນຢູ່ ສປປ ລາວ.

**ມາດຕາ 16 ປະເທດທີ່ຜູ້ລົງທຶນພາຍໃນສາມາດໄປລົງທຶນ**

ຜູ້ລົງທຶນພາຍໃນ ສາມາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ນຳປະເທດ ດັ່ງນີ້:

1. ປະເທດສະມາຊິກອາຊຽນ;
2. ປະເທດສະມາຊິກອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO).

**ມາດຕາ 17 ການໂຈະການອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ການອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຈະຖືກໂຈະ ກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງຕໍ່ໄປນີ້:

1. ໄດ້ຮັບອະນຸຍາດໃຫ້ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ບົນພື້ນຖານການສະໜອງຂໍ້ມູນ ຫຼື ເອກະສານ ທີ່ບໍ່ຖືກຕ້ອງ;
2. ສະໜອງຂໍ້ມູນ ຫຼື ເອກະສານ ກ່ຽວກັບການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
3. ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ບໍ່ແຈ້ງການຢຸດເຊົາການເຄື່ອນໄຫວການລົງທຶນຢູ່ຕ່າງປະເທດ;
5. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງຖືກໂຈະການອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຜູ້ລົງທຶນພາຍໃນ ຕ້ອງປັບປຸງແກ້ໄຂສາເຫດຂອງການໂຈະດັ່ງກ່າວໃຫ້ສຳເລັດ ຕາມກຳນົດເວລາທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໄວ້.

**ມາດຕາ 18 ການຖອນໃບອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ໃບອະນຸຍາດລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຈະຖືກຖອນ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງຕໍ່ໄປນີ້:

1. ຜູ້ລົງທຶນພາຍໃນສະເໜີຖອນໃບອະນຸຍາດລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ດ້ວຍຄວາມສະໝັກໃຈ;
2. ສືບຕໍ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ບໍ່ແກ້ໄຂສາເຫດຂອງການໂຈະ;
3. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງຜູ້ລົງທຶນພາຍໃນ ຖືກຖອນໃບອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຜູ້ລົງທຶນດັ່ງກ່າວ ຕ້ອງນຳເອົາເງິນສ່ວນທີ່ເຫຼືອຈາກການລົງທຶນ ກັບຄືນປະເທດໃຫ້ຄົບຖ້ວນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຖືກຖອນໃບອະນຸຍາດດັ່ງກ່າວ ເປັນຕົ້ນໄປ.

## ໝວດທີ 4
## ສິດ, ໜ້າທີ່ ແລະ ຂໍ້ຫ້າມ

**ມາດຕາ 19 ສິດ ແລະ ໜ້າທີ່ຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດ ອັດຕາສ່ວນການລົງທຶນຂອງ ທະນາຄານທຸລະກິດ ທີ່ຈະໄປລົງທຶນໃນຫຼັກຊັບ ຢູ່ຕ່າງປະເທດ;

2. ຄົ້ນຄວ້າ ທະນາຄານທຸລະກິດໃດໜຶ່ງທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕາມການສະເໜີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ພິຈາລະນາອະນຸຍາດ ການໂອນເງິນເຂົ້າ-ອອກປະເທດຂອງ ຜູ້ລົງທຶນພາຍໃນທີ່ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມທັງຕິດຕາມການໂອນເງິນເຂົ້າ-ອອກ ດັ່ງກ່າວ;

4. ໃຫ້ການຮ່ວມມືກັບ ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

5. ຊຸກຍູ້ໃຫ້ຜູ້ລົງທຶນພາຍໃນ ທີ່ຕົນຄຸ້ມຄອງ ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນກັບຄືນ ສປປ ລາວ ພາຍຫຼັງສິ້ນການລົງທຶນຂອງຕົນເປັນຕົ້ນໄປ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດ ອັດຕາສ່ວນການລົງທຶນຂອງບໍລິສັດປະກັນໄພ ແລະ ລັດວິສາຫະກິດ ທີ່ຈະໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

2. ຄົ້ນຄວ້າ ບໍລິສັດປະກັນໄພ ແລະ ລັດວິສາຫະກິດ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ໃຫ້ການຮ່ວມມືກັບ ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

4. ຊຸກຍູ້ໃຫ້ຜູ້ລົງທຶນພາຍໃນ ທີ່ຕົນຄຸ້ມຄອງ ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນກັບຄືນ ສປປ ລາວ ພາຍຫຼັງສິ້ນການລົງທຶນຂອງຕົນເປັນຕົ້ນໄປ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ກຳນົດອັດຕາສ່ວນການລົງທຶນຂອງ ບໍລິສັດຫຼັກຊັບ ແລະ ກອງທຶນເພື່ອການລົງທຶນ ທີ່ຈະໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

2. ຕິດຕາມ, ກວດກາ ການເຄື່ອນໄຫວຂອງຜູ້ລົງທຶນພາຍໃນ ທີ່ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

3. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກ່ອນການອະນຸຍາດໃຫ້ແກ່ຜູ້ລົງທຶນພາຍໃນ ທີ່ຈະໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

4. ໃຫ້ການຮ່ວມມືກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການອະນຸຍາດຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

5. ໂຈະ ແລະ/ຫຼື ຖອນ ໃບອະນຸຍາດການໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ;

6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທີ່ຄຸ້ມຄອງຜູ້ລົງທຶນພາຍໃນ ເພື່ອຊຸກຍູ້ໃຫ້ຜູ້ລົງທຶນພາຍໃນ ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍຫຼັງສິ້ນການລົງທຶນຂອງຕົນເປັນຕົ້ນໄປ;

7. ປະຕິບັດມາດຕະການທາງບໍລິຫານຕໍ່ຜູ້ລົງທຶນພາຍໃນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງກະຊວງທີ່ກ່ຽວຂ້ອງ**

ກະຊວງທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດອັດຕາສ່ວນການລົງທຶນຂອງນິຕິບຸກຄົນ ທີ່ຕົນຄຸ້ມຄອງ ທີ່ຈະໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

2. ຄົ້ນຄວ້າ ນິຕິບຸກຄົນ ທີ່ຕົນຄຸ້ມຄອງ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ປະສານສົມທົບ ແລະ ໃຫ້ການຮ່ວມມືກັບ ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

4. ຊຸກຍູ້ໃຫ້ຜູ້ລົງທຶນພາຍໃນ ທີ່ຕົນຄຸ້ມຄອງ ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍຫຼັງສິ້ນການລົງທຶນຂອງຕົນເປັນຕົ້ນໄປ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັກສາຂໍ້ມູນ ແລະ ເອກະສານກ່ຽວກັບການລົງທຶນຂອງຜູ້ລົງທຶນພາຍໃນ ທີ່ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດໄວ້ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ຮັບປະກັນຄວາມປອດໄພ;

2. ສ້າງກົນໄກຕິດຕາມການເຄື່ອນໄຫວລົງທຶນ ຂອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດຢ່າງເປັນລະບົບ;

3. ຊ່ວຍປະສານງານ ແລະ ດຳເນີນການເປີດບັນຊີຫຼັກຊັບ ຢູ່ ບໍລິສັດຫຼັກຊັບ ຕ່າງປະເທດ ໃຫ້ແກ່ຜູ້ລົງທຶນພາຍໃນ;

4. ສົ່ງຄຳສັ່ງຊື້ ຂາຍຫຼັກຊັບຕາມການສະເໜີຂອງ ຜູ້ລົງທຶນພາຍໃນ;

5. ໃຫ້ຄຳປຶກສາ ຫຼື ໃຫ້ຄຳແນະນຳ ກ່ຽວກັບການໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

6. ໃຫ້ການຮ່ວມມື, ສະໜອງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບຜູ້ລົງທຶນພາຍໃນ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ລາຍງານສະພາບການລົງທຶນ ແລະ ທຸລະກຳຊື້ ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນແຕ່ລະ ເດືອນ, ໄຕມາດ, 6 ເດືອນຕົ້ນປີ ແລະ ປີ ພາຍໃນເວລາ 10 ວັນ ລັດຖະການ ຂອງເດືອນຖັດໄປ, ປະຈຳໄຕມາດ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດໄຕມາດ ແລະ ປະຈຳປີ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດປີ ເປັນຕົ້ນໄປ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທີ່ຄຸ້ມຄອງຜູ້ລົງທຶນພາຍໃນ ເພື່ອຊຸກຍູ້ໃຫ້ຜູ້ລົງທຶນພາຍໃນ ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍຫຼັງສິ້ນສຸດການລົງທຶນຂອງຕົນເປັນຕົ້ນໄປ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຜູ້ລົງທຶນພາຍໃນ**

ຜູ້ລົງທຶນພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບຍອດເຫຼືອການລົງທຶນໃນຫຼັກຊັບແຕ່ລະປະເພດ ແລະ ຍອດເຫຼືອເງິນໃນບັນຊີເພື່ອລໍຖ້າລົງທຶນ ເປັນແຕ່ລະເດືອນ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດເດືອນເປັນຕົ້ນໄປ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຈົນກວ່າຈະສິ້ນສຸດ ການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

2. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບການລົງທຶນໃນຫຼັກຊັບຢູ່ຕ່າງປະເທດຈາກ ບໍລິສັດຫຼັກຊັບ ຕາມລະບຽບການ;

3. ປະຕິບັດພັນທະເສຍຄ່າບໍລິການໃຫ້ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ແຈ້ງຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງຊາບ ກໍລະນີຜູ້ລົງທຶນພາຍໃນມີຈຸດປະສົງຢຸດເຊົາ ການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ດ້ວຍຄວາມສະໝັກໃຈ;

5. ຕ້ອງນຳເງິນທີ່ໄດ້ຈາກດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍໃນເວລາ 30 ວັນ ນັບແຕ່ວັນທີ່ໄດ້ຮັບເງິນເປັນຕົ້ນໄປ;

6. ໃຫ້ການຮ່ວມມືກັບ ພາກສ່ວນທີ່ກ່ຽວຂ້ອງ ກັບການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 ຂໍ້ຫ້າມສຳລັບຜູ້ລົງທຶນພາຍໃນ ແລະ ບໍລິສັດຫຼັກຊັບ**

ຫ້າມຜູ້ລົງທຶນພາຍໃນ ແລະ ບໍລິສັດຫຼັກຊັບ ມີພຶດຕິກຳ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເກີນອັດຕາສ່ວນການລົງທຶນ, ວົງເງິນການລົງທຶນ ແລະ/ຫຼື ບໍ່ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;

3. ລົງທຶນບໍ່ຖືກຕ້ອງຕາມແຜນການ ກ່ຽວກັບການໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຕົນ;

4. ສະໜອງ ຂໍ້ມູນ ແລະ ເອກະສານ ບໍ່ຖືກຕ້ອງຕາມຄວາມເປັນຈິງ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ບໍ່ລາຍງານເປັນແຕ່ລະ ເດືອນ, ໄຕມາດ, ຫົກເດືອນຕົ້ນປີ ແລະ ປີ ກ່ຽວກັບຜົນການລົງທຶນໃນຫຼັກຊັບຢູ່ຕ່າງປະເທດໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

6. ບໍ່ນໍາເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍຫຼັງສິ້ນການລົງທຶນຂອງຕົນເປັນຕົ້ນໄປ;

7. ມີພຶດຕິກໍາອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ລົງທຶນພາຍໃນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ.

### ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ຜູ້ລົງທຶນພາຍໃນ ແລະ ບໍລິສັດຫຼັກຊັບ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດ ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ໃດໜຶ່ງ ຫຼື ທັງໝົດ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທໍາອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ແຈ້ງຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໃນການຢຸດເຊົາການລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຕົນ, ມີການລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບພາກສ່ວນກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ລາຍງານສະພາບການລົງທຶນ ແລະ ທຸລະກໍາຊື້ ຂາຍຫຼັກຊັບຂອງຜູ້ລົງທຶນພາຍໃນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນແຕ່ລະ ເດືອນ, ໄຕມາດ, ຫົກເດືອນຕົ້ນປີ ແລະ ປີ ລ່າຊ້າ;

4. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງຂໍ້ຕົກລົງສະບັບນີ້;

5. ກໍລະນີອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີສອງ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

2. ຜູ້ລົງທຶນພາຍໃນ ໄປລົງທຶນໃນຫຼັກຊັບ ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສຳລັບຜູ້ລົງທຶນປະເພດພາຍໃນ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ;

3. ຜູ້ລົງທຶນພາຍໃນ ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເກີນອັດຕາສ່ວນການລົງທຶນ, ວົງເງິນການລົງທຶນ ແລະ/ຫຼື ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

4. ຜູ້ລົງທຶນພາຍໃນ ໄປລົງທຶນບໍ່ຖືກຕ້ອງຕາມແຜນການ ກ່ຽວກັບການໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຕົນ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

5. ຜູ້ລົງທຶນພາຍໃນ ແລະ ບໍລິສັດຫຼັກຊັບ ບໍ່ສະໜອງ ຂໍ້ມູນ ແລະ ເອກະສານ ບໍ່ຖືກຕ້ອງຕາມຄວາມເປັນຈິງ ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

6. ບໍລິສັດຫຼັກຊັບ ບໍ່ລາຍງານເປັນແຕ່ລະ ເດືອນ, ໄຕມາດ, ຫົກເດືອນຕົ້ນປີ ແລະ ປີ ກ່ຽວກັບຜົນການລົງທຶນໃນຫຼັກຊັບຢູ່ຕ່າງປະເທດຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ;

7. ບໍ່ນຳເງິນທີ່ໄດ້ຈາກ ດອກເບ້ຍ, ເງິນປັນຜົນ, ຜົນຕອບແທນອື່ນ ແລະ ເງິນທຶນທີ່ສິ້ນສຸດການລົງທຶນ ທີ່ບໍ່ມີຈຸດປະສົງລົງທຶນຕໍ່ ຫຼື ເງິນທີ່ໂອນໄປລົງທຶນແຕ່ບໍ່ໄດ້ລົງທຶນ ກັບຄືນ ສປປ ລາວ ພາຍຫຼັງສິ້ນສຸດການລົງທຶນຂອງຕົນ ຈະຖືກປັບໃໝ 1 ເທົ່າ ຂອງຈຳນວນເງິນທີ່ໄປລົງທຶນ.

ມາດຕະການເພີ່ມເຕີມ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງ ຕາມການກຳນົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພາຍໃນເວລາ 1 ປີ ພາຍຫຼັງສິ້ນສຸດເວລາດັ່ງກ່າວ ຖ້າຍັງບໍ່ສາມາດແກ້ໄຂໄດ້ ແມ່ນຈະບໍ່ອະນຸຍາດໃຫ້ໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດໃນຄັ້ງຕໍ່ໄປ;

2. ໂຈະການອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

3. ຖອນໃບອະນຸຍາດໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ລົງທຶນພາຍໃນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການຄຸ້ມຄອງຜູ້ລົງທຶນພາຍໃນທີ່ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ສອນໄຊ ສີພັນດອນ